# ຮູ້ຈັກ ກັບສະສາໜາອິສລາມ

## ﴿التعريف بدين الإسلام﴾

ຖອດປິດຄອນຈາກ

www.islamhouse.com


ແປ ແລະຮຽບຮຽງໂດຍ

ມູຫັມມັດ ຊໍແລະຫ໌



2020-1441

بسم الله الرحمن الحيم

ດ້ວຍພະນາມຂອງອັລລໍຫ໌ ຜູ້ສິງກະລຸນາ ຜູ້ສິງເມດຕາ ປານີສະເໝີ

## 1. ສາສະໜາອິສລາມແມ່ນຍັງ?

ສາສະໜາອິສລາມແມ່ນການຍອມຮັບແລະການປະຕິບັດຕາມໂອຫວາດຄຳສອນຂອງພຣະຜູ້ເປັນເຈົ້າເຊິ່ງພຣະອົງສິງເປີດເຜີຍຕໍ່ສາສະນະທູດອົງສຸດທ້າຍຂອງພຣະອົງ ນັ່ນຄື ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ

## 2. ຄວາມເຊື່ອພື້ນຖານຂອງສາສະໜາອິສລາມມີຍັງແດ່?

### 2.1 ເຊື່ອໃນພຣະຜູ້ເປັນເຈົ້າ

ຊາວມຸສລິມເຊື່ອໃນພຣະຜູ້ເປັນເຈົ້າທີ່ບໍ່ມີສິ່ງໃດມາປຽບທຽບໄດ້ ມີເອກະລັກສະນະໂດດເດັ່ນພິເສດພຽງພຣະອົງດຽວ ຜູ້ເຊິ່ງບໍ່ມີລູກຫຼືບໍລິວານ ແລະບໍ່ມີຜູ້ໃດມີສິດທີ່ຈະໄດ້ຮັບການສັກກາລະບູຊາ ນອກຈາກພຣະອົງພຽງຜູ້ດຽວເທົ່ານັ້ນ ພຣະອົງສິງເປັນພຣະຜູ້ເປັນເຈົ້າຢ່າງແທ້ຈິງ ແລະພຣະເຈົ້າອົງອື່ນລ້ວນເປັນສິ່ງສັກກາລະຈອມປອມ ພຣະອົງສິງມີພະນາມທີ່ມວນຊື່ນ ແລະມີຄຸນນະລັກສະນະອັນພຽບພ້ອມງົດງາມ ບໍ່ມີຜູ້ໃດຈະມາແບ່ງຄວາມເປັນພຣະເຈົ້າຂອງພຣະອົງ ຫຼືຄຸນນະລັກສະນະອັນສົມບູນຂອງພຣະອົງໄປໄດ້ ໃນພຣະຄຳພີອັລ-ກຸຣອານ ພຣະເຈົ້າສິງອະທິບາຍຕົວຂອງພະອົງເອງໄວ້ດັ່ງນີ້:

﴿ قُلْ هُوَ اللّٰهُ اَحَدٌ، اللّٰهُ الصَّمَدُ، لَمْ يَلِدْ وَلَمْ يُوْ لَدْ ، وَلَمْ يَكُنْ لَّهُ كُفُوًا اَحَدٌ ﴾

ບົດທີ່ 112 ຂອງພຣະຄຳພີອັລ-ກຸຣອານ

﴾ ຄວາມໝາຍວ່າ: ຈົ່ງກ່າວ(ມຸຫັມມັດ) ພຣະອົງຄືອັລລໍຫ໌ຜູ້ສິງເອກະກະ , ພຣະອົງອັລລໍຫ໌ນັ້ນເປັນທີ່ພຶ່ງ, ພຣະອົງສິງບໍ່ປະສູດ(ບໍ່ເກີດ)ແລະບໍ່ຖືກປະສູດ(ບໍ່ຖືກເກີດ) , ແລະບໍ່ມີຜູ້ໃດສະເໝີດັ່ງພຣະອົງ ﴿

ບໍ່ມີຜູ້ໃດມີສິດທີ່ຈະໄດ້ຮັບການເອີ້ນຊື່ລຳລຶກເຖິງ ການອ້ອນວອນການບູຊາ ຫຼືການໄດ້ຮັບການສະແດງການສັກກາລະບູຊາ ນອກຈາກພຣະຜູ້ເປັນເຈົ້າແຕ່ພຽງຜູ້ດຽວເທົ່ານັ້ນ!!

ພຣະຜູ້ເປັນເຈົ້າພຽງອົງດຽວຄືຜູ້ມີອຳນາດສູງສຸດ ເປັນຜູ້ສ້າງ ເປັນຜູ້ຄອບຄອງ ແລະເປັນຜູ້ບັນດານທຸກສັບພະສິ່ງໃນຈັກກະວານນີ້ ພຣະອົງສິງຈັດການທຸກກິດການງານ ພຣະອົງສິງມີຢູ່ໂດຍບໍ່ຈຳເປັນຕ້ອງພຶ່ງພາສັດໂລກຂອງພຣະອົງ ແລະສັດໂລກທົ່ວໜ້າຕ່າງຕ້ອງພຶ່ງພາພຣະອົງສຳລັບທຸກສິ່ງທີ່ພວກເຂົາຕ້ອງການ ພຣະອົງສິງບໍລິຫານທຸກສັບພະສິ່ງ ສິງເຫັນທຸກສັບພະສິ່ງ ແລະສິງຮອບຮູ້ໃນທຸກສັບພະສິ່ງໃນຫຼັກປະຕິບັດຢ່າງສົມບູນແບບ ຄວາມຮອບຮູ້ຂອງພຣະອົງສິງຄອບຄຸມເໜືອທຸກສັບພະສິ່ງທັ້ງເລື່ອງທີ່ເປີດເຜີຍແລະທີ່ເປັນຄວາມລັບ ແລະ ຕໍ່ສາທາລະນະຊົນທີ່ເປັນສ່ວນພຣະອົງ ພຣະອົງສິງຮອບຮູ້ໃນສິ່ງທີ່ເກີດຂຶ້ນ ສິ່ງທີ່ຈະເກີດຂຶ້ນ ແລະ ຈະເກີດຂຶ້ນແນວໃດ ບໍ່ມີກິດຈະການໃດເກີດຂຶ້ນໃນໂລກໃບນີ້ໄດ້ ເວັ້ນແຕ່ເປັນພຣະປະສົງຂອງພຣະເຈົ້າຈະໃຫ້ມັນບັງເກີດ

ສິ່ງໃດກໍ່ຕາມທີ່ພຣະອົງປະສົງທີ່ຈະໃຫ້ມັນເກີດ ກໍ່ຈະຕ້ອງເກີດ ແລະ ສິ່ງໃດທີ່ພຣະອົງບໍ່ປະສົງຈະໃຫ້ມັນບັງເກີດ ກໍ່ຈະບໍ່ບັງເກີດແລະບໍ່ມີທາງບັງເກີດຂຶ້ນໄດ້ ຄວາມປະສົງຂອງພຣະອົງຢູ່ເໜືອຄວາມຕ້ອງການຂອງສັດໂລກທັ້ງປວງ ພຣະອົງສິງມີອຳນາດຢູ່ເໜືອທຸກສັບພະສິ່ງ ແລະພຣະອົງສິງສາມາດປະຕິບັດທຸກສັບພະສິ່ງຕາມຄວາມຕ້ອງການຂອງພຣະອົງ ພຣະອົງຜູ້ສິງກະລຸນາປານີ ຜູ້ສິງເມດຕາສະເໝີ ພະອົງສິງເປັນຜູ້ໂອບອ້ອມອາລີ(ໃຈດີ)

ໜຶ່ງໃນການບອກເລົ່າຂອງສາສະນະທູດມຸຫັມມັດ ຊັລລັລລໍຫຸ ອະລັຍຮິວະຊັລລາມ ໃຫ້ພວກເຮົາໄດ້ຮັບຮູ້ວ່າ ພຣະຜູ້ເປັນເຈົ້າສິງມີພຣະເມດຕາຕໍ່ສັບພະສິ່ງຖືກສ້າງຂອງພຣະອົງຫຼາຍກວ່າແມ່ທີ່ເມດຕາຕໍ່ລູກກວ່າອີກ[1] ພຣະຜູ້ເປັນເຈົ້າສິງຢູ່ຫ່າງໄກຈາກຄວາມອະຍຸຕິທຳແລະການກົດຂີ່ ພຣະອົງສິງຮອບຮູ້ທຸກສັບພະສິ່ງທີ່ສິງສ້າງສັນແລະສິງກຳໜົດ ຫາກຜູ້ໃດຕ້ອງການບາງສິ່ງຈາກພຣະຜູ້ເປັນເຈົ້າ ຜູ້ນັ້ນສາມາດອ້ອນວອນຂໍໄດ້ຈາກພຣະອົງໂດຍກົງ ໂດຍບໍ່ຕ້ອງພຶ່ງພາຜູ້ອື່ນເປັນໂຕກາງໃຫ້ຂໍຮ້ອງຕໍ່ພຣະອົງພຣະຜູ້ເປັນເຈົ້າໃຫ້ກັບໂຕເອງ

( 1 ) ເປັນການບັນຍາຍຂອງ ສໍຫິຫ໌ ມຸສລິມ ເລກທີ່ 2754 ແລະ ສໍຫິຫ໌ ອັລ-ບຸກໍຣີ ເລກທີ່ 5999

ພຣະຜູ້ເປັນເຈົ້າບໍ່ແມ່ນພະເຍຊູ ແລະ ພະເຍຊູກໍ່ບໍ່ແມ່ນພຣະເຈົ້າ[1] ຂະນາດວ່າພະເຍຊູເອງກໍ່ປະຕິເສດໃນເລື່ອງນີ້ ພຣະຜູ້ເປັນເຈົ້າໄດ້ກ່າວໄວ້ໃນພຣະຄໍາພີອັລ-ກຸຣອານດັ່ງນີ້:

﴿ لَقَدْ كَفَرَ الَّذِيْنَ قَالُواْ إِنَّ اللهَ هُوَ الْمَسِيحُ ابْنُ مَرْيَمَ وَقَالَ الْمَسِيحُ يَا بَنِي إِسْرَائِيلَ اعْبُدُواْ اللهَ رَبِّي وَرَبَّكُمْ إِنَّهُ مَن يُشْرِكْ بِا للهِ فَقَدْ حَرَّمَ اللهُ عَلَيْهِ الجَنَّةَ وَمأْوَاهُ النَّارُ وَمَا لِلظَّالِمِينَ مِنْ أَنصَارٍ ﴾ { المائدة: ٧٢ }

( ຄວາມໝາຍ: "ແທ້ຈິງບັນດາຜູ້ທີ່ກ່າວວ່າ ອັລລໍຫ໌ຄື ອັລ-ມະຊີ (ສາສະນະທູດອີຊາ ຫຼື ພະເຍຊູ) ລູກຂອງມັຣຍັມ ພວກລາວໄດ້ຕົກເປັນຜູ້ປະຕິເສດສັດທາແລ້ວ ແລະອັລ-ມະຊີໄດ້ກ່າວວ່າ ວົງວານອິສຣໍອີລເອີ໋ຍ! ຈົ່ງເຄົາລົບອິບາດະຫ໌ຕໍ່ອັລລໍຫຜູ້ເປັນພຣະເຈົ້າຂອງຂ້ອຍ ແລະເປັນພຣະເຈົ້າຂອງພວກທ່ານ ແທ້ຈິງຜູ້ໃດທີ່ມີພາຄີແກ່ອັລລໍຫ໌ແລ້ວ ແນ່ນອນອັລລໍຫ໌ຈະສົ່ງໃຫ້ສະຫວັນເປັນທີ່ຕ້ອງຫ້າມສໍາລັບລາວແລະທີ່ພໍານັກຂອງລາວນັ້ນຄືນະຣົກ ແລະສໍາລັບບັນດາຜູ້ທີ່ອະທໍານັ້ນຍ່ອມບໍ່ມີການຊ່ວຍເຫຼືອໃດໆ"[2] ) {ອັລ-ກຸຣອານ 5:72}

ພຣະຜູ້ເປັນເຈົ້າບໍ່ໄດ້ມີຫຼາຍອົງ ດັ່ງທີ່ພະຜູ້ເປັນເຈົ້າໄດ້ກາວ່າໄວ້ໃນຄໍາພີອັລ-ກຸຣອານດັ່ງນີ້:

﴿ لَّقَدْ كَفَرَ ٱلَّذِينَ قَالُوٓاْ إِنَّ ٱللَّهَ ثَالِثُ ثَلَٰثَةٍۘ وَمَا مِنْ إِلَٰهٍ إِلَّآ إِلَٰهٌ وَٰحِدٌۚ وَإِن لَّمْ يَنتَهُواْ عَمَّا يَقُولُونَ لَيَمَسَّنَّ ٱلَّذِينَ كَفَرُواْ مِنْهُمْ عَذَابٌ أَلِيمٌ. أَفَلَا يَتُوبُونَ إِلَى ٱللَّهِ وَيَسْتَغْفِرُونَهُۥۚ وَٱللَّهُ غَفُورٌ رَّحِيمٌ. مَّا ٱلْمَسِيحُ ٱبْنُ مَرْيَمَ إِلَّا رَسُولٌ قَدْ خَلَتْ مِن قَبْلِهِ ٱلرُّسُلُ وَأُمُّهُۥ صِدِّيقَةٌۖ كَانَا يَأْكُلَانِ ٱلطَّعَامَۗ ٱنظُرْ كَيْفَ نُبَيِّنُ لَهُمُ ٱلْءَايَٰتِ ثُمَّ ٱنظُرْ أَنَّىٰ يُؤْفَكُونَ. ﴾ { المائدة: ٧٣-٧٥ }

( 1 ) ເປັນການລາຍງານສະມາຄົມນັກໜັງສືພິມ ລອນດອນ ວັນທີ່ 25 ມິຖຸນາ 2527 ເຊິ່ງພະບິຊອບ ນິກາຍແອງກະລິກັນສ່ວຍໃຫຍ່ເຊິ່ງໄດ້ຮັບການສໍາລວດຈາກລາຍການໂທລະທັດ ລາຍການໜຶ່ງ ກ່າວວ່າ "ຄຣິສສາສະນິກກະຊົນບໍ່ໄດ້ຖືກບັງຄັບໃຫ້ເຊື່ອວ່າພຣະເຍຊູຄືສຄືພຣະຜູ້ເປັນພຣະເຈົ້າ" ການສໍາລວດຄວາມຄິດເຫັນຈາກພະບິຊັອບໃນປະເທດອັງກິດຈໍານວນ 31 ຮູບຈາກທັ້ງໝົດ 39 ຮູບ ລາຍງານນັ້ນຍັງກ່າວອີກວ່າ ຈໍານວນພະບິຊັອບ 19 ຮູບຈາກ 31 ຮູບ ໄດ້ກ່າວວ່າ ເປັນການສົມຄວນທີ່ຈະນັບຖືພະເຍຊູວ່າເປັນ "ຜູ້ແທ່ນສູງສຸດຂອງພຣະຜູ້ເປັນເຈົ້າ" ການສໍາລວດຄວາມຄິດເຫັນຄັ້ງນີ້ຈັດຂຶ້ນໂດຍລາຍການສາສະໜາປະຈໍາອະທິດຂອງລາຍການໂທລະທັດປະຈໍາວັນອະທິດຂອງກຸງລອນດອນໃນລາຍການ "ເຄໂດ" (Credo)

( 2 ) ຜູ້ປະຕິບັດຜິດສິນລະທໍາ ໄດ້ແກ່ ຜູ້ທີ່ສັດໃນພຣະເຈົ້າຫຼາຍພຣະອົງ

( ຄວາມໝາຍ: "ແທ້ຈິງບັນດາທີ່ກ່າວວ່າ ອັລລໍຫ໌ເປັນຜູ້ທີ່ສາມຂອງສາມອົງ ນັ້ນໄດ້ຕົກເປັນຜູ້ປະຕິເສດສັດທາແລ້ວ ບໍ່ມີສິ່ງໃດຄວນໄດ້ຮັບການເຄົາລົບພັກດີນອກຈາກຜູ້ທີ່ຄວນເຄົາລົບສັກກາພຣະອົງດຽວເທົ່ານັ້ນ ແລະຫາກພວກເຂົາບໍ່ຢຸດຈາກສິ່ງທີ່ພວກລາວກ່າວ ແນ່ນອນບັນດາຜູ້ປະຕິເສດການສັດທາໃນໝູ່ພວກເຂົານັ້ນຈະຕ້ອງໄດ້ປະສົບລົງໂທດອັນເຈັບແສບ" – "ພວກເຂົາຈະບໍ່ສຳນຶກຜິດກັບຕົວຕໍ່ອັລລໍຫ໌ ແລະຂໍອະໄພຍະໂທດຕໍ່ພຣະອົງແບບນັ້ນວາ? ແລະພຣະອົງນັ້ນເປັນຜູ້ສົງອະໄພຍະໂທດແລະຜູ້ສົງເອັນດູເມດຕາສະເໝີ" – "ມະຊີ(ພະເຍຊູ) ລູກຂອງມັຣຍັມ ນັ້ນບໍ່ໄດ້ແມ່ນຜູ້ໃດອື່ນນອກຈາກເປັນຣໍສູລ(ສາສະນະທູດ) ຄົນໜຶ່ງເທົ່ານັ້ນ ເຊິ່ງເຄີຍມີສາສະນະທູດມາກ່ອນລາວແລ້ວ ແມ່ຂອງລາວເປັນຜູ້ມີສັດຈະຫຼາຍ ທັງສອງນັ້ນຮັບປະທານອາຫານ ຈົ່ງເບິ່ງວ່າເຮົາໄດ້ອະທິບາຍໂອການ(ຫຼັກຖານ)ແກ່ພວກເຂົາໄວ້ແນວໃດແລ້ວເຫດໃດພວກເຂົາຈຶ່ງຍັງຖືກຕົວະບໍ່ຍອມຮັບຄວາມຈິງ") {ອັລ-ກຸຣອານ 5:72}

ຜູ້ນັບຖືສາສະໜາອິສລາມຈະປະຕິເສດເລື່ອງທີ່ພຣະເຈົ້າສົງເປັນຜູ້ກັບມາເກີດເປັນມະນຸດ ແລະຍັງປະຕິເສດເລື່ອງທີ່ພຣະເຈົ້າມີລັກສະນະໃດໆ ປຽບດັ່ງມະນຸດທັງໝົດ ນີ້ກໍ່ເປັນການຍຽດຍາມໃນພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າສົງຢູ່ເໜືອສິ່ງອື່ນໃດ ພຣະອົງສົງຢູ່ຫ່າງຈາກຄວາມບໍ່ກຽມພ້ອມ ພຣະອົງບໍ່ເຄີຍຮູ້ສຶກເມື່ອຍບໍ່ມີແຮງ ແລະພຣະອົງບໍ່ເຄີຍຮູ້ສຶກເລື່ອງຢາກນອນ

ໃນພາສາອາຣັບບິກ ຄຳວ່າ **ອັລລໍຫ໌** ໝາຍເຖິງພຣະຜູ້ເປັນເຈົ້າ (ພຣະຜູ້ເປັນເຈົ້າທີ່ແທ້ຈິ່ງພຽງພຣະອົງດຽວເຊິ່ງສ້າງສັນທັງຈັກກະວານ) ຄຳວ່າ ອັລລໍຫ໌ ຄືພະນາມຂອງພຣະຜູ້ເປັນເຈົ້າ ເຊິ່ງນຳມາໃຊ້ໂດຍຜູ້ເວົ້າພາສາອາຣັບບິກ ທັງຊາວອາຣັບທີ່ເປັນມຸສລິມແລະອາຣັບທີ່ເປັນຊາວຄຣິສຕຽນ ຄຳນີ້ບໍ່ສາມາດນຳໄປໃຊ້ເອີ້ນສິ່ງອື່ນໆໄດ້ນອກຈາກພຣະຜູ້ເປັນເຈົ້າທີ່ແທ້ຈິ່ງພຽງພະອົງດຽວ ພາສາອາຣັບບິກຄຳວ່າ ອັລລໍຫ໌ ປະກົດໃນພຣະຄຳພີອັລ-ກຸຣອານປະມານ 2700 ຄັ້ງ ໃນພາສາອາຣາມາອິກ ເຊິ່ງເປັນພາສາທີ່ກ່ຽວກັບພາສາອາຣັບບິກແລະເປັນພາສາເຊິ່ງພະເຍຊູສົງໃຊ້ບອກເລົ່າອະທິບາຍ[1] ແລະພຣະຜູ້ເປັນເຈົ້າຍັງສົງໄດ້ຮັບການກ່າວເຖິງວ່າເປັນພຣະອັລລໍຫ໌ນຳອີກ

( 1 ) NIV Compact Dictionary of the Bible ຂອງ Douglas ໜ້າທີ່ 42

## 2.2 ຄວາມເຊື່ອໃນເລື່ອງມະລາອິກະຫ໌ (ເທວະດາ ຫຼື ເທວະທູດ)

ຊາວມຸສລິມເຊື່ອວ່າມະລາອິກະຫ໌ (ເທວະທູດ ) ມີຢູ່ແທ້ ແລະເຊື່ອວ່າມະລາອິກະຫ໌ເຫຼົ່ານັ້ນເປັນຜູ້ສິ່ງກຽດ ບັນດາມະລາອິກະຫ໌ຕ່າງໃຫ້ຄວາມເຄົາລົບພຣະຜູ້ເປັນເຈົ້າອົງດຽວເຊື່ອຟັງພຣະອົງ ແລະປະຕິບັດຕາມຄໍາບັນຊາຂອງພຣະອົງເທົ່ານັ້ນ ໃນບັນດາມະລາອິກະຫ໌ເຫຼົ່ານັ້ນ[1] ມະລາອິກະຫ໌ຈິບລີລ (ກາບຣຽລ) ຄືຜູ້ນໍາເອົາພຣະຄໍາພີອັລ-ກຸຣອານ ລົງມາມອບໃຫ້ແກ່ສາສະນະທູດມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ

## 2.3 ຄວາມເຊື່ອໃນຄໍາພີທີ່ສິ່ງເປີດເຜີຍຂອງພຣະຜູ້ເປັນເຈົ້າ

ຊາວມຸສລິມເຊື່ອວ່າພຣະຜູ້ເປັນເຈົ້າສິ່ງເປີດເຜີຍ ປະທານໜັງສື ຫຼື ຄໍາພີໃຫ້ແກ່ຜູ້ຖືສານຂອງພຣະອົງໄວ້ເປັນເຄື່ອງພິສູດແລະເປັນເຄື່ອງຊີ້ທາງສໍາລັບມະນຸດຊາດ ໜຶ່ງໃນໜັງສືເຫຼົ່ານີ້ໄດ້ແກ່ ພະຄໍາພີອັລ-ກຸຣອານ ເຊິ່ງພຣະຜູ້ເປັນເຈົ້າສິ່ງເປີດເຜີຍແກ່ສາສະນະທູດມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ພຣະຜູ້ເປັນເຈົ້າສິ່ງໃຫ້ຄໍາຮັບຮອງກ່ຽວກັບການປ້ອງກັນການຄິດໂກງ ຫຼື ການບິດເບືອນຂໍ້ແທ້ຈິງໃນພຣະຄໍາພີອັລ-ກຸຣອານ ພຣະອົງໄດ້ກ່າວວ່າ

﴿ إِنَّا نَحْنُ نَزَّلْنَا الذِّكْرَ وَإِنَّا لَهُ لَحَافِظُونَ ﴾ {الحجر: ٩}

( ຄວາມໝາຍ "ແທ້ຈິງເຮົາໄດ້ໃຫ້ພະຄໍາພີອັລ-ກຸຣອານລົງມາ ແລະແທ້ຈິງເຮົາເປັນຜູ້ຮັກສາມັນຢ່າງແນ່ນອນ") {ອັລ-ກຸຣອານ 15:9}

## 2.4 ຄວາມເຊື່ອໃນສາສະນະທູດແລະຜູ້ຖືສານຂອງພຣະຜູ້ເປັນເຈົ້າ

ຊາວມຸສລິມເຊື່ອໃນສາສະນະທູດແລະຜູ້ຖືສານຂອງພຣະຜູ້ເປັນເຈົ້າ ເລີ່ມຈາກອາດັມຮ່ວມທັ້ງໂນອາ ອັບຣາຮັມ ອິສມາເອລ ໄອແຊກ ຈາຄອບ ໂມເສສ ແລະພະເຍຊູ (ຂໍຄວາມສັນຕິປະສົບເດ່ພວກທ່ານ) ແຕ່ສານສະບັບສຸດທ້າຍຂອງພຣະຜູ້ເປັນເຈົ້າທີ່ສິ່ງມອບໃຫ້ແກ່ມະນຸດຊາດ ເປັນການຢືນຍັນອີກຄັ້ງໜຶ່ງໃນເລື່ອງຂອງສານນິລັນດອນ ເຊິ່ງເປີດເຜີຍແກ່ສາສະນະທູດ

---

( 1 ) ຫາກສິ່ງສັຍແລະຢາກຮູ້ເພີ່ມເຕີມສາມາດສຶກສາໄດ້ຈາກໜັງສື ຫຼັກພື້ນຖານສາສະໜາອິສລາມ ມີອະທິບາຍໄວ້

ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ຊາວມຸສລິມເຊື່ອວ່າມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ສິ່ງເປັນສາສະນະທູດອົງສຸດທ້າຍທີ່ປະທານຈາກພຣະຜູ້ເປັນເຈົ້າ ຕາມທີ່ພຣະຜູ້ເປັນເຈົ້າໄດ້ກ່າວໄວ້ວ່າ:

﴿ مَا كَانَ مُحَمَّدٌ أَبَا أَحَدٍ مِّن رِّجَالِكُمْ وَلَكِن رَّسُولَ اللهِ وَخَاتَمَ النَّبِيِّينَ ﴾ {الأحزاب: ٤٠}

( ຄວາມໝາຍ “ມຸຫັມມັດບໍ່ໄດ້ເປັນພໍ່ຜູ້ໃດໃນໝູ່ຜູ້ຊາຍຂອງພວກເຈົ້າ ແຕ່ເປັນຣໍສູລຂອງອັລລໍຫ໌ແລະ ຄົນສຸດທ້າຍແຫ່ງບັນດານະບີ”) {ອັລ-ກຸຣອານ 30:40}

ຊາວມຸສລິມເຊື່ອວ່າສາສະນະທູດແລະຜູ້ຖືສານທັງໝົດໄດ້ຮັບການສັນສ້າງໃຫ້ມາເກີດເປັນມະນຸດ ຜູ້ເຊິ່ງບໍ່ໄດ້ມີຄຸນສົມບັດແຫ່ງເທບຢ່າງພຣະຜູ້ເປັນເຈົ້າແຕ່ຢ່າງໃດ

## 2.5 ຄວາມເຊື່ອໃນວັນພິພາກສາ

ຊາວມຸສລິມເຊື່ອໃນວັນພິພາກສາ (ວັນຟື້ນຄືນຊີບ) ເມື່ອມວນມະນຸດຈະຕ້ອງຟື້ນຄືນຊີບມາຟັງຄຳພິພາກສາຂອງພຣະຜູ້ເປັນເຈົ້າ ເຊິ່ງຂຶ້ນຢູ່ກັບຄວາມເຊື່ອແລະການປະຕິບັດຂອງລາວ

## 2.6 ຄວາມເຊື່ອໃນ ອັລ-ກໍດໍ ອັລ-ກໍດັຣ (ກົດກຳໜົດສະພາວະດີແລະຊົ່ວ)

ຊາວມຸສລິມເຊື່ອໃນ ອັລ-ກໍດໍ ອັລ-ກໍດັຣ ເຊິ່ງເປັນການກຳໜົດແຫ່ງພຣະເຈົ້າ ແຕ່ໃນຄວາມເຊື່ອໃນເລື່ອກຳໜົດແຫ່ງພຣະເຈົ້ານີ້ບໍ່ໄດ້ໝາຍຄວາມມະນຸດຈະບໍ່ມີຄວາມນຶກຄິດທີ່ເປັນອິສລະ ແຕ່ຊາວມຸສລິມເຊື່ອວ່າພຣະຜູ້ເປັນເຈົ້າໄດ້ປະທານຄວາມນຶກຄິດທີ່ເປັນອິສລະໃຫ້ກັບມະນຸດ ເຊິ່ງໝາຍຄວາມວ່າພວກເຮົາສາມາດເລືອກເຮັດໃນສິ່ງທີ່ຖືກ ຫຼື ຜິດໄດ້ ແລະ ພວກເຂົາເຫຼົ່ານັ້ນຕ້ອງມີໜ້າທີ່ຮັບຜິດຊອບໃນສິ່ງທີ່ໂຕເອງໄດ້ເລືອກປະຕິບັດເຮັດໄປນັ້ນໆ

ຄວາມເຊື່ອໃນການກຳໜົດແຫ່ງພຣະເຈົ້ານັ້ນໄດ້ແກ່ ຄວາມເຊື່ອໃນສິ່ງດັ່ງຕໍ່ໄປນີ້; 1) ພຣະຜູ້ເປັນເຈົ້າສິ່ງຮອບຮູ້ໃນທຸກໆສັບພະສິ່ງ ພຣະອົງສິ່ງຮັບຮູ້ວ່າມີຍັງເກີດຂຶ້ນແລະແມ່ນຍັງຈະເກີດຂຶ້ນ 2) ພຣະຜູ້ເປັນເຈົ້າສິ່ງບັນທຶກເຫດການທີ່ເກີດຂຶ້ນທັງໝົດແລະສິ່ງທີ່ຈະເກີດຂຶ້ນທັງໝົດເອົາໄວ້ແລ້ວ 3) ແມ່ນຍັງກໍ່ຕາມທີ່ພຣະຜູ້

ເປັນເຈົ້າປະສົງຈະໃຫ້ເກີດຈະຕ້ອງບັງເກີດຂຶ້ນ ແລະແມ່ນຢັງກໍ່ຕາມທີ່ພຣະອົງບໍ່ປະສົງຈະໃຫ້ເກີດ ມັນກໍ່ຈະບໍ່ບັງເກີດ 4) ພຣະຜູ້ເປັນເຈົ້າສົງເປັນຜູ້ສ້າງທຸກສັບພະສິ່ງ

## 3. ມີແຫຼ່ງຂໍ້ມູນທີ່ເປັນບົດບັນຍັດອື່ນໃດແດ່ນອກຈາກອັລກຸຣອານ?

ມີຢູ່ໃນສຸນນະຫ໌ (sunnah) “ສິ່ງທີ່ ສາສະນະທູດ ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ໄດ້ເຮັດ ແລະອະນຸຍາດ” ຄືແຫຼ່ງຂໍ້ມູນທີ່ສອງໃນສາສະໜາອິສລາມ ສຸນນະຫ໌ປະກອບໄດ້ດ້ວຍຫະດິຊ (Hadeeths) ເຊິ່ງເປັນການລາຍງານຖ່າຍທອດມາຢ່າງນ່າເຊື່ອຖືຈາກບັນດາສະຫາຍຂອງສາສະນະທູດ ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ໃນສິ່ງທີ່ທ່ານໄດ້ກ່າວ ຫຼືປະຕິບັດເປັນແບບຢ່າງເອົາໄວ້ ຫຼື ໄດ້ຮັບຮອງອະນຸຍາດ ຄວາມເຊື່ອໃນສຸນນະຫ໌ເປັນຄວາມເຊື່ອເບື້ອງຕົ້ນຢ່າງໜຶ່ງຂອງຊາວມຸສລິມ

### ຕົວຢ່າງຄຳເວົ້າຂອງສາສະນະທູດ ມຸຫັມມັດ[1]

- ☪ ປຽບຄວາມຮູ້ສຶກຂອງຜູ້ສັດທາໃນເລື່ອງຄວາມຮັກ ຄວາມເມດຕາ ແລະຄວາມກະລຸນາ ຕໍ່ບຸກຄົນອື່ນ ປຽບດັ່ງຮ່າງກາຍຕົວເອງ ຫາກສ່ວນໃດຂອງຮ່າງກາຍເຈັບປວດລົງ ຮ່າງກາຍທັງໝົດຈະໄດ້ຮັບຄວາມທຸກແລະຄວາມເຈັບປວດນັ້ນແດ່[2]
- ☪ ຜູ້ທີ່ດີທີ່ສຸດແລະສົມບູນທີ່ສຸດຄື ຜູ້ທີ່ດີທີ່ສຸດໃນເລື່ອງສິນລະທຳແລະຈັນຍາບັນ ແລະຜູ້ທີ່ດີທີ່ສຸດໃນບັນດາພວກລາວນັ້ນໄດ້ແກ້ຜູ້ທີ່ດີທີ່ສຸດຕໍ່ເມັຍຂອງພວກລາວ[3]
- ☪ ບໍ່ມີຜູ້ໃດໃນໝູ່ພວກເຈົ້າມີຄວາມເຊື່ອ(ຢ່າງສົມບູນ) ຈົນກວ່າລາວຈະຮັກພີ່ນ້ອງຂອງລາວຄືດັ່ງທີ່ລາວຮັກຕົວລາວເອງ[4]
- ☪ ມະນຸດຜູ້ມີເມດຕາຈະໄດ້ຮັບຄວາມເມດຕາຈາກພຣະຜູ້ສົງເມດຕາ ຈົ່ງສະແດງຄວາມເມດຕາຕໍ່ມະນຸດໂລກ ແລະພຣະຜູ້ເປັນເຈົ້າຈະສົງສະແດງຄວາມເມດຕາຕໍ່ທ່ານ[5]

---

( 1 ) ສາມາດຮຽນເພີ່ມເຕີມຈາກໜັງສື 40 ຫະດິຊ ນະວະວີ ພ້ອມຄວາມໝາຍພາສາລາວ ( 2 ) ບັນທຶກໂດຍ ສໍຫິຫ໌ ມຸສລິມ ເລກທີ່ 2586 ແລະ ສໍຫິຫ໌ ອັລ-ບຸກໍຣີ ເລກທີ່ 6011 ( 3 ) ບັນທຶກໂດຍ ສໍຫິຫ໌ ມຸສນັດ ອະມັດ ເລກທີ່ 7354 ແລະ ອັດຕິຣມີຊີ ເລກທີ່ 1162 ( 4 ) ບັນທຶກໂດຍ ສໍຫິຫ໌ ມຸສລິມ ເລກທີ່ 45 ແລະ ສໍຫິຫ໌ ອັລ-ບຸກໍຣີ ເລກທີ່ 13 ( 5 ) ບັນທຶກໂດຍ ສໍຫິຫ໌ ອັດຕິຣມີຊີ ເລກທີ່ 1924 ແລະ ສໍຫິຫ໌ ອາບູ ດາວູດ ເລກທີ່ 4941

- ☪ ການຍິ້ມໃຫ້ພີ່ນ້ອງຂອງພວກເຈົ້າເປັນການເຮັດບຸນກຸສົນ(ບໍລິຈາກ)[1]
- ☪ ການເວົ້າໃນສິ່ງທີ່ດີເປັນການບໍລິຈາກ[2]
- ☪ ຜູ້ໃດກໍ່ຕາມທີ່ສັດທາໃນພຣະຜູ້ເປັນເຈົ້າແລະວັນສິ້ນໂລກ(ວັນຟື້ນຄືນຊີບ) ຄວນເຮັດດີຕໍ່ເພື່ອນບ້ານຂອງເຂົາ[3]
- ☪ ພຣະຜູ້ເປັນເຈົ້າຈະບໍ່ພິຈະລະນາເບິ່ງເຈົ້າທີ່ລັກສະນະໜ້າຮູບຮ່າງຂອງພວກເຈົ້າແຕ່ຈະພິຈະລະນາຈາກຫົວໃຈຂອງພວກເຈົ້າ[4]
- ☪ ຈົ່ງຈ່າຍຄ່າແຮງງານກັບລູກຈ້າງກ່ອນນ້ຳເຫື່ອຍຂອງລາວຈະແຫ້ງ[5]
- ☪ ມີຊາຍຄົນໜຶ່ງກຳລັງເດີນທາງເປັນເວລາດົນນານຈົນເປັນສາເຫດໃຫ້ກະຫາຍນ້ຳຢ່າງໜັກ ເມື່ອລາວເຫັນບໍນ້ຳລາວຈຶ່ງລົງໄປຕັກນ້ຳນັ້ນດື່ມເພາະກະຫາຍ ແລະໄດ້ດື່ມຈົນເຕັມກະເພາະ ຈາກນັ້ນລາວກໍ່ຂຶ້ນມາຈາກບໍນ້ຳລາວເຫັນຫມາລີ້ນຫ້ອຍໂຕໜຶ່ງ ພະຍະຍາມລາມເລຍລົງໄປພື້ນຂີ້ດິນເພື່ອດັບຄວາມກະຫາຍນ້ຳ ຊາຍຄົນນັ້ນກ່າວວ່າ "ຫມາໂຕນີ້ຮູ້ສຶກກະຫາຍນ້ຳຄືກັບທີ່ຂ້ອຍຮູ້ສຶກເລີຍ" ດັ່ງນັ້ນ ລາວຈຶ່ງຢາງລົງໄປໃນບໍນ້ຳອີກຄັ້ງໜຶ່ງແລະໄດ້ເອົາເກີບຂອງລາວຕັກນ້ຳຂຶ້ນມາ ແລະນຳໃຫ້ຫມາໂຕນັ້ນດື່ມ ດັ່ງນັ້ນພຣະຜູ້ເປັນເຈົ້າຈຶ່ງຂອບໃຈລາວແລະຢົກເລີກບາບທັ້ງໝົດຂອງລາວ ມີຜູ້ຖາມສາສະນະທູດ ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ວ່າ: ໂອ້ຜູ້ຖືສານຂອງພຣະຜູ້ເປັນເຈົ້າ ພວກເຮົາຈະໄດ້ຮັບສິ່ງຕອບແທນສຳລັບຄວາມກະລຸນາທີ່ມີຕໍ່ສັດທັ້ງຫຼາຍນຳເດວາ? ທ່ານສາສະນະທູດ ຕອບວ່າ ມີສິ່ງຕອບແທນສຳລັບຄວາມກະລຸນາທີ່ມີໃຫ້ແກ່ມວນມະນຸດແລະສັດທັ້ງຫຼາຍທີ່ມີຊີວິດ[6]

---

( 1 ) ບັນທຶກໂດຍ ອັດ-ຕິຣມີຊີ  ເລກທີ່ 1956

( 2 )  ບັນທຶກໂດຍ ສໍຫິຫ ມຸສລິມ ເລກທີ່ 1009 ແລະ ສໍຫິຫ ອັລ-ບຸກໍຣີ ເລກທີ່ 2989

( 3 ) ບັນທຶກໂດຍ ສໍຫິຫ ມຸສລິມ ເລກທີ່ 48 ແລະ ສໍຫິຫ ອັລ-ບຸກໍຣີ ເລກທີ່ 6019

( 4 ) ບັນທຶກໂດຍ ສໍຫິຫ ມຸສລິມ ເລກທີ່ 2564

( 5 ) ບັນທຶກໂດຍ ສໍຫິຫ ອິບນູ ມາຈະຫ ເລກທີ່ 2443

( 6 ) ບັນທຶກໂດຍ ສໍຫິຫ ມຸສລິມ ເລກທີ່ 2244 ແລະ ສໍຫິຫ ອັລ-ບຸກໍຣີ ເລກທີ່ 2466

## 4. ສາສະໜາອິສລາມເວົ້າແນວໃດກ່ຽວກັບວັນພິພາກສາ

ເຊັ່ນດຽວກັບຊາວຄິສສາສະນິກກະຊົນ ຊາວມຸສລິມເຊື່ອວ່າຊີວິດໃນໂລກປັດຈຸບັນນີ້ເປັນພຽງການກຽມຕົວເພື່ອມາທົດສອບໃຊ້ຊີວິດສຳລັບໂລກໜ້າທີ່ຈະມີຂຶ້ນ ເທົ່ານັ້ນ ຊີວິດເປັນພຽງການທົດສອບຂອງແຕ່ລະບຸກຄົນສຳລັບຊີວິດຫຼັງຄວາມຕາຍ ວັນໜຶ່ງຈະມາຮອດເມື່ອທັງຈັກກະວານນີ້ຖືກທຳລາຍແລະຄົນຕາຍຈະກັບຟື້ນຄືນຊີບ ເພື່ອມາຮັບຟັງຄຳພິພາກສາຈາກພຣະຜູ້ເປັນເຈົ້າ ວັນນັ້ນຈະເປັນວັນທີ່ເລີ່ມຕົ້ນຊີວິດອຳມະຕະນິລັນດອນ ໃນວັນນັ້ນມວນມະນຸດທັງໝົດຈະໄດ້ຮັບການຕອບແທນໃນສິ່ງທີ່ຕົນເອງໄດ້ປະຕິບັດໄວ້ໃນໂລກດຸນຍາ(ໂລກນີ້) ບຸກຄົນໜຶ່ງເຊິ່ງໄດ້ຕາຍໃນຂະນະທີ່ມີຄວາມເຊື່ອວ່າ "ບໍ່ມີພະເຈົ້າທີ່ແທ້ຈິ່ງອື່ນໃດ ນອກຈາກອັລລໍຫ໌ ພຣະຜູ້ເປັນເຈົ້າ ແລະມຸຫັມມັດນັ້ນຄື ຜູ້ຖືສານ(ສາສະນະທູດ) ຂອງອັລລໍຫ໌ ພຣະຜູ້ເປັນເຈົ້າ" ແລະເປັນຊາວມຸສລິມ ລາວຈະໄດ້ຮັບການຕອບແທນໃນວັນນັ້ນແລະຈະໄດ້ຮັບອະນຸຍາດໃຫ້ເຂົ້າໄປໃຊ້ຊີວິດໃນສວນສະຫວັນຕະລອດນິລັນດອນ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ກ່າວວ່າ:

﴿وَالَّذِينَ آمَنُواْ وَعَمِلُواْ الصَّالِحَاتِ أُولَئِكَ أَصْحَابُ الْجَنَّةِ هُمْ فِيهَا خَالِدُونَ﴾{البقرة: ٨٢}

( ຄວາມໝາຍ "ສວນບັນດາຜູ້ສັດທາ ແລະປະກອບຄວາມດີ ຈະເປັນຜູ້ທີ່ໄດ້ຢູ່ໃນສວນສະຫວັນ ແລະພຳນັກຢູ່ທີ່ນັ້ນຕະຫຼອດການ") {ອັລ-ກຸຣອານ 2:82}

ແຕ່ສຳລັບບຸກຄົນເຊິ່ງຕາຍໃນຂະນະທີ່ບໍ່ເຊື່ອວ່າ "ບໍ່ມີພຣະເຈົ້າທີ່ແທ້ຈິ່ງອື່ນໃດ ນອກຈາກອັລລໍຫ໌ ພຣະຜູ້ເປັນເຈົ້າ ແລະມຸຫັມມັດນັ້ຄື ຜູ້ຖືສານ(ສາສະນະທູດ) ຂອງອັລລໍຫ໌ ພຣະຜູ້ເປັນເຈົ້າ" ຫຼືຜູ້ທີ່ບໍ່ແມ່ນຊາວມຸສລິມ ຈະບໍ່ພົບຫົນທາງໄປສູ່ສວນສະຫວັນ ແລະຈະຖືກສົ່ງລົງໄປຂຸມນະຣົກ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ກ່າວວ່າ:

﴿ وَمَن يَبْتَغِ غَيْرَ الإِسْلاَمِ دِينًا فَلَن يُقْبَلَ مِنْهُ وَهُوَ فِي الآخِرَةِ مِنَ الْخَاسِرِينَ ﴾{آل عمران: ٨٢}

( ຄວາມໝາຍ "ແລະຜູ້ໃດທີ່ສະແວງຫາສາສະໜາອື່ນໃດນອກຈາກອິສລາມແລ້ວ ສາສະໜານັ້ນກໍ່ຈະບໍ່ຖືກຮັບເປັນອັນຂາດ ແລະໃນວັນອາຄິເຣາະຫ໌(ໂລກໜ້າ) ລາວຈະໄດ້ບໍ່ຮັບຢັງນອກຈາກເປັນຜູ້ຂາດທຶນ") {ອັລ-ກຸຣອານ 3:85}

ແລະຕາມທີ່ພະອົງໄດ້ກ່າວໄວ້ວ່າ:

﴿ إِنَّ الَّذِينَ كَفَرُواْ وَمَاتُواْ وَهُمْ كُفَّارٌ فَلَن يُقْبَلَ مِنْ أَحَدِ هِم مِّلْ ءُ الأَرْضِ ذَهَبًا وَلَوِ افْتَدَى بِهِ أُوْلَئِكَ لَهُمْ عَذَابٌ أَلِيمٌ وَمَا لَهُم مِّن نَّاصِرِينَ ﴾{ آل عمران: ٩١}

( ຄວາມໝາຍ "ແທ້ຈິງບັນດາຜູ້ປະຕິເສດສັດທາ ແລະພວກເຂົາຕາຍໃນຂະນະທີ່ພວກເຂົາເປັນຜູ້ປະຕິເສດສັດທານັ້ນ ທອງເຕັມແຜ່ນດິນກໍ່ຈະບໍ່ຖືກຕອບຮັບຈາກຄົນໃດໃນໝູ່ພວກເຂົາເຈົ້າເປັນອັນຂາດ ເຖິງວ່າເຂົາຈະໃຊ້ຄຳໄຖ່ໂຕເຂົາກໍ່ຕາມຊິນເຫຼົ່ານີ້ແຫລະ ສຳລັບພວກເຂົານັ້ນ ຄືການລົງໂທດອັນເຈັບແສບແລະທັ້ງບໍ່ມີບັນດາຜູ້ຊ່ວຍໃດໆ ສຳລັບພວກລາວ") {ອັລ-ກຸຣອານ 3:91}

ອາດມີຄົນຖາມວ່າ: ຂ້າພະເຈົ້າຄິດວ່າສາສະໜາອິສລາມເປັນສາສະໜາທີ່ດີທີ່ສຸດສາສະໜາໜຶ່ງ ແຕ່ຖ້າຂ້າພະເຈົ້າຕ້ອງປຽນມານັບຖືສາສະໜາອິສລາມ ຄອບຄົວຂອງຂ້າພະເຈົ້າ ໝູ່ຄູ່ ແລະຄົນອື່ນໆ ອາດບໍ່ມັກຂ້າພະເຈົ້າແລະເວົ້າບໍ່ດີໃຫ້ ດັ່ງນັ້ນ ຖ້າຂ້າພະເຈົ້າບໍ່ໄດ້ປຽນມານັບຖືສາສະໜາອິສລາມ ຂ້າພະເຈົ້າຈະໄດ້ເຂົ້າສວນສະຫວັນແລະຣອດພົ້ນຈາກໄຟນະຣົກຫຼືບໍ່?

**ຄຳຕອບຄື:** ສິ່ງທີ່ພຣະຜູ້ເປັນເຈົ້າໄດ້ກ່າວໄວ້ ແລະໄດ້ຍົກມາອະທິບາຍໃຫ້ຄື "ແລະຜູ້ໃດທີ່ສະແວງຫາສາສະໜາອື່ນໃດນອກຈາກອິສລາມແລ້ວ ສາສະໜານັ້ນກໍ່ຈະບໍ່ຖືກຮັບເປັນອັນຂາດ ແລະໃນວັນອາຄິເຣາະຫ(ໂລກໜ້າ) ລາວຈະໄດ້ບໍ່ຮັບຍັງນອກຈາກເປັນຜູ້ຂາດທຶນ"

ຫຼັງຈາກໄດ້ສົ່ງທ່ານສາສະນະທູດ ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ໃຫ້ມາສັ່ງສອນຜູ້ຄົນໃຫ້ນັບຖືສາສະໜາອິສລາມແລ້ວ ພຣະຜູ້ເປັນເຈົ້າສິ່ງບໍ່ຍອມຮັບການເລື່ອມໃສໃນສາສະໜາອື່ນໃດນອກຈາກສາສະໜາອິສລາມ ພຣະຜູ້ເປັນເຈົ້າຄືຜູ້ສ້າງແລະຜູ້ຈັດການໂລກຂອງພວກເຮົາ ພຣະອົງສົງສ້າງສັບພະສິ່ງໃນໂລກໃຫ້ກັບພວກເຮົາ ທັ້ງສັບພະສິ່ງທີ່ດີແລະສັບສິນທັ້ງໝົດທີ່ເຮົາມີຢູ່ມາຈາກພຣະອົງທັ້ງໝົດ ດັ່ງນັ້ນ ທັ້ງໝົດທີ່ໄດ້ເວົ້າມານີ້ ເມື່ອຜູ້ໃດທີ່ປະຕິເສດບໍ່ຍອມຮັບສັດທາຕໍ່ພຣະຜູ້ເປັນເຈົ້າ ສາສະນະທູດມຸຫັມມັດຂອງພຣະຜູ້ເປັນເຈົ້າ ຫຼືສາສະໜາອິສລາມຂອງພຣະຜູ້ເປັນເຈົ້າ ລາວກໍ່ສົມຄວນຈະໄດ້ຮັບການລົງໂທດໃນຊີວິດຫຼັງຄວາມຕາຍ ແລະທີ່ແທ້ຈິ່ງແລ້ວວັດຖຸປະສົງຫຼັກໆທີ່ພຣະຜູ້ເປັນເຈົ້າສ້າງພວກເຮົາຂຶ້ນມາກໍ່ເພື່ອການ

ເຄົາລົບໃນພຣະຜູ້ເປັນເຈົ້າພຽງອົງດຽວແລະເຊື່ອຟັງພຣະອົງ ດັ່ງທີ່ພຣະອົງໄດ້ກ່າວໃນອັລ-ກຸຣອານ (51:56)

ຊີວິດທີ່ເຮົາຢູ່ປັດຈຸບັນມັນເປັນພຽງເວລາສັ້ນໆ ຜູ້ທີ່ບໍ່ສັດທາໃນວັນພິພາກສາຈະຄິດວ່າຊີວິດຂອງພວກລາວທີ່ຢູ່ໂລກນີ້ເປັນພຽງການໃຊ້ຊີວິດໄປວັນໆ ຫາກເຮັດດີຕາຍໄປແລ້ວກໍ່ຈະໄດ້ເກີດໃໝ່ ຫາກເຮັດຊົ່ວກໍ່ຈະບໍ່ໄດ້ເກີດເປັນມະນຸດ ຕາມທີ່ພະອົງໄດ້ກ່າວໄວ້ວ່າ :

﴿ قَالَ كَمْ لَبِثْتُمْ فِي الأَرْضِ عَدَدَ سِنِينَ، قَالُوا لَبِثْنَا يَوْمًا أَوْ بَعْضَ يَوْمٍ ﴾ {المؤمنون : ١١٣-١١٢}

( ຄວາມໝາຍ "ພຣະອົງໄດ້ກ່າວວ່າ ພວກເຈົ້າພຳນັກຢູ່ໃນແຜ່ນດິນເປັນຈຳນວນຈັກປີ ?" "ພວກເຂົາຕອບວ່າ ເຮົາພຳນັກຢູ່ມື້ໜຶ່ງຫຼືສ່ວນໜຶ່ງຂອງມື້ດຽວ) {ອັລ-ກຸຣອານ 23:112-113}

ແລະ ພຣະອົງໄດ້ກ່າວອີກວ່າ:

﴿ أَفَحَسِبْتُمْ أَنَّمَا خَلَقْنَاكُمْ عَبَثًا وَأَنَّكُمْ إِلَيْنَا لاَ تُرْجَعُوْنَ، فَتَعَالَى اللهُ الْمَلِكُ الْحَقُّ لاَإِلَهَ إِلاَّ هُوَ رَبُّ الْعَرْشِ الْكَرِيمِ ﴾ {المؤمنون : ١١٦-١١٥}

( ຄວາມໝາຍ "ພວກເຈົ້າຄິດວ່າແທ້ຈິ່ງເຮົາສ້າງພວກເຈົ້າມາໂດຍບໍ່ມີປະໂຫຍດ ແລະແທ້ຈິ່ງພວກເຈົ້າຈະບໍ່ກັບໄປຫາເຮົາແບບນັ້ນຫວາ?", ອັລລໍຫ໌ຜູ້ສິງສູງສົ່ງ ຜູ້ສິງມີອຳນາດ ຜູ້ສິງສັດຈະ ບໍ່ມີພະເຈົ້າອື່ນໃດນອກຈາກພຣະອົງ ຜູ້ເປັນພຣະເຈົ້າແຫ່ງບັນລັງ ຜູ້ສິງມີກຽດ) {ອັລ-ກຸຣອານ 23:115-116}

ຊີວິດຫຼັງຄວາມຕາຍເປັນຊີວິດທີ່ແທ້ຈິ່ງ ບໍ່ພຽງແຕ່ເປັນດວງວິນຍານເທົ່ານັ້ນ ແຕ່ຮວມທັ້ງຮ່າງກາຍອີກດ້ວຍ ເຮົາຈະໃຊ້ຊີວິດຫຼັງຄວາມຕາຍໂດຍມີຮ່າງກາຍແລະວິນຍານ

ເມື່ອປຽບທຽບໂລກໃບນີ້ກັບໂລກຊີວິດຫຼັງຄວາມຕາຍ ທ່ານສາສະນະທູດມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ໄດ້ໃຫ້ຄວາມໝາຍວ່າ:

**"ຄຸນຄ່າຂອງໂລກໃບນີ້ເມື່ອປຽບທຽບກັບໂລກຫຼັງຄວາມຄວາມຕາຍແລ້ວ ປຽບດັ່ງການຢືກນິ້ວມືຂຶ້ນມາຈາກທ້ອງທະເລເມື່ອເຈົ້າຈຸ່ມນິ້ວລົງໄປໃນທ້ອງທະເລ ແລະຈາກນັ້ນກໍ່ເອົານິ້ວມືຂຶ້ນມາ"**[1] ຄວາມໝາຍກໍ່ຄື ຄຸນຄ່າຂອງໂລກໃບນີ້ເມື່ອ ປຽບທຽບກັບໂລກຫຼັງຄວາມຕາຍແລ້ວ ປຽບດັ່ງຢົດນ້ຳພຽງສອງສາມຢົດເມື່ອ ປຽບທຽບກັບທ້ອງທະເລ.

## 5. ບຸກຄົນໜຶ່ງຈະເປັນມຸສລິມຕ້ອງເຮັດແນວໃດ?

ພຽງການກ່າວຖ້ອຍຄວາມສັດທາທີ່ແທ້ຈິງວ່າ:

"أَشْهَدُ أَنْ لَا إِلَهَ إِلَّا اللهُ وَ أَشْهَدُ أَنَّ مُحَمَّدًا رَسُولُ اللهِ"

(``As hadu AlLa ilaha illa Allah, Wa Ashudu Anna Muhammadar rasoolul Allah``)

{ ອັຊຫະດຸ ອັລລາອີລາຫະ ອິລລັລລໍຫ໌ ວະອັຊຫະດຸ ອັນນະ ມຸຫັມມັດ ຣໍສູລລຸລລໍ }

ຄວາມໝາຍວ່າ: "ຂ້າພະເຈົ້າຂໍປະຕິຍານຕົນວ່າ ແທ້ຈິງບໍ່ມີພຣະເຈົ້າອື່ນໃດ ນອກຈາກອັລລໍຫ໌ ແລະຂ້າພະເຈົ້າຂໍປະຕິຍານຕົນວ່າ ມຸຫັມມັດເປັນສາສະນະທູດ ຂອງອັລລໍຫ໌" ບຸກຄົນນັ້ນເຊິ່ງໄດ້ປຽນມານັບຖືສາສະໜາອິສລາມແລະກາຍເປັນມຸສ ລິມແລ້ວ

ໃນສ່ວນຄຳທຳອິດ ຄຳວ່າ: ບໍ່ມີພະເຈົ້າອື່ນໃດນອກຈາກອັລລໍຫ໌ ໝາຍ ຄວາມວ່າບໍ່ມີຜູ້ໃດມີສິດທີ່ຈະໄດ້ຮັບການເຄົາລົບບູຊານອກຈາກພຣະຜູ້ເປັນເຈົ້າອັລ ລໍຫ໌ພຽງອົງດຽວເທົ່ານັ້ນ ແລະພຣະຜູ້ເປັນເຈົ້າບໍ່ໄດ້ມີພໍ່ແມ່ມີລູກໃດໆທັ້ງນັ້ນ ການ ເປັນມຸສລິມຄວນປະຕິບັດໂຕດັ່ງນີ້

- ✓ ເຊື່ອວ່າພຣະຄຳພີອັລ-ກຸຣອານທີ່ສັກສິດເປັນພຣະດຳລັດຂອງພຣະຜູ້ເປັນ ເຈົ້າໂດຍແທ້ ເຊິ່ງພຣະອົງສົງເປີດເຜີຍແລະປະທານແກ່ທ່ານສາສະນະທູດ ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ

[1] ( 1 ) ບັນທຶກໂດຍ ສໍຫິຫ ມຸສລິມ ເລກທີ່ 2858 ແລະມູສນັດ ອະມັດ ເລກທີ່ 17560

- ✓ ເຊື່ອວ່າວັນພິພາກສາ (ວັນຟື້ນຄືນຊີບ) ເປັນຄວາມຈິງແລະຈະມາຮອດ ຕາມທີ່ພະອົງໄດ້ສັນຍາໄວ້ໃນພຣະຄໍາພີອັລ-ກຸຣອານ
- ✓ ຍອມຮັບສາສະໜາອິສລາມເປັນສາສະໜາຂອງຕົວເອງ
- ✓ ບໍ່ເຄົາລົບບູຊາສິ່ງອື່ນໃດ ຫຼືບຸກຄົນໃດນອກຈາກພະຜູ້ເປັນເຈົ້າອັລລໍຫ໌

ທ່ານສາສະນະທູດ ມຸຫັມມັດ ຊັລລັລລໍຫຸ ອະລັຍຮິ ວະຊັລລາມ ໄດ້ກ່າວເອົາໄວ້ວ່າ: "ພຣະຜູ້ເປັນເຈົ້າສິງໂປດປານແລະດີໃຈກັບການສາລະພາບບາບຂໍອະໄພຍະໂທດຂອງບຸກຄົນໃດບຸກຄົນໜຶ່ງເມື່ອລາວຫັນມາຫາພຣະອົງ (ຄືການຫັນກັບຈາກຜູ້ປະຕິເສດມານັບຖືສາສະໜາອິສລາມແລະກາຍເປັນມຸສລິມ) ຫຼາຍກວ່າຄວາມດີໃຈຂອງຜູ້ໃດຜູ້ໜຶ່ງໃນໝູ່ພວກເຈົ້າ ສົມມຸດວ່າລາວຂີ່ອູດເຂົ້າໄປໃນທະເລຊາຍທີ່ແຫ້ງແລ້ງ ແລະມັນໄດ້ໜີ້ຈາກລາວໄປ ນໍາເອົາອາຫານແລະນໍ້າຂອງລາວໄປນໍາ ດັ່ງນັ້ນລາວຈຶ່ງໝົດຄວາມຫວັງໄປຢ່າງແໜ່ວແນ່ໃນການທີ່ຈະໄປອູດກັບມາ ລາວຈຶ່ງເດີນໄປທີ່ຕົ້ນໄມ້ແລະນອນພັກຢູ່ໃຕ້ຮົ່ມເງົາຕົ້ນໄມ້ດັ່ງກ່າວ (ເພື່ອລໍ່ຖ້າຄວາມຕາຍ) ເນື່ອງຈາກລາວໝົດຫົນທາງທີ່ຈະພົບເຫັນອູດຂອງລາວ ຕໍ່ມາຂະນະທີ່ຢູ່ໃນສະພາບດັ່ງກ່າວ (ສິ້ນຫວັງ) ທັນໃດນັ້ນ ອູດໂຕນັ້ນໄດ້ມາຢູ່ຕໍ່ໜ້າລາວ! ດັ່ງນັ້ນລາວຈຶ່ງຮີບຈັບເຊືອກມັດອູດເອົາໄວ້ແລະຮ້ອງໄຫ້ສະອຶກສະອື້ນດ້ວຍຄວາມປິຕິຍິນດີ ຕື້ນຕັນ ແລະດີໃຈຈົນລຸດປາກເວົ້າອອກມາວ່າ "ໂອ້ ພຣະຜູ້ເປັນເຈົ້າ ພຣະອົງຄືຂ້າຮັບໃຊ້ຂອງຂ້າພະເຈົ້າ ແລະຂ້າພະເຈົ້າຄືນາຍຂອງພຣະອົງ" ຄວາມຜິດພາດຂອງລາວເກີດຂຶ້ນຈາກຄວາມປິຕິຍິນດີອັນປຽມລົ້ນຂອງລາວນັ້ນເອງ"[2]

---

( 1 ) ຕາມທີ່ເຮົາໄດ້ອະທິບາຍເອົາໄວ້ວ່າ ໃນພາສາອາຣັບບິກ ຄໍາວ່າ ອັລລໍຫ ໝາຍຄວາມວ່າ ພະຜູ້ເປັນເຈົ້າ (ພະຜູ້ເປັນເຈົ້າທີ່ແທ້ຈິງ ພຽງພະອົງດຽວເຊິ່ງເປັນຜູ້ສ້າງທັ້ງຈັກກະວານ ຄໍາວ່າອັລລໍຫເປັນພະນາມຂອງພະຜູ້ເປັນເຈົ້າເຊິ່ງຜູ້ທີ່ເວົ້າພາສາອາຣັບບິກເປັນຜູ້ໃຊ້ ທັ້ງຊາວມຸສລິມທີ່ເປັນຄົນອາຣັບ ແລະຊາວຄິສຕຽນທີ່ເປັນອາຣັບ

( 2 ) ບັນທຶກໂດຍ ສໍຫິຫ ມຸສລິມ ເລກທີ່ 2747 ແລະ ສໍຫິຫ ອັລ-ບຸກຄໍຣີ ເລກທີ່ 6309